# ແຜນງານສາທາລະນະສຸກ ແລະ ໂພຊະນາການ

ແຜນງານ *LAO/035*



**ຂະແໜງການ |** ສາທາລະນະສຸກ

**ອົງການ |** LuxDev

**ໄລຍະເວລາ |** 01.01.2023 - 31.12.2027 (60 ເດືອນ)

**ບັນດາກຸ່ມເປົ້າໝາຍ**

ກອມເອົາທົ່ວປະເທດ ເຊິ່ງເນັ້ນໃສ່ປະຊາຊົນທັງໝົດໃນ 4 ແຂວງ ລວມມີ: ແຂວງບໍລິຄຳໄຊ, ແຂວງຄໍາມ່ວນ, ແຂວງວຽງຈັນ ແລະ ແຂວງບໍ່ແກ້ວ ຄາດຄະເນຈຳນວນປະຊາກອນທັງໝົດ 1,400,000 ຄົນ.

**ສະຖາບັນທີ່ຜູກພັນ**

ກະຊວງສາທາລະນະສຸກ

**ນະໂຍບາຍຂອງຂະແໜງການ ແລະ ຍຸດທະສາດທີ່ອ້າງອີງ**

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 ແລະ ແຜນພັດທະນາຂະແໜງສາທາລະນະສຸກ

**ງົບປະມານ |** 35,802,420 ເອີໂຣ




ເຖິງແມ່ນວ່າ ຈະມີຜົນສຳເລັດທີ່ພົ້ນເດັ່ນໃນການປັບປຸງຜົນໄດ້ຮັບຂອງຂະແໜງສາທາລະນະສຸກກໍ່ຕາມ ເຊິ່ງລວມມີ ອາຍຸຍືນສະເລ່ຍແລະບັນດາຕົວຊີ້ບອກຫຼັກ ເຊັ່ນ: ການຕາຍຂອງເດັກ, ເດັກນ້ອຍທີ່ມີອາຍຸຕ່ຳກວ່າ 5 ປີ ແລະ ການຕາຍຂອງແມ່ ຈາກບັນດາພະຍາດທີ່ສາມາດປ້ອງກັນໄດ້ ແລະໃນປັດຈຸບັນກໍຍັງຄົງຢູ່ໃນລະດັບສູງຢູ່, ລວມທັງ ບັນດາຕົວຊີ້ບອກທາງດ້ານໂພຊະນາການຢູ່ຂື້ນບ້ານ ທີ່ຍັງມີການພັດທະນາລ່າຊ້າ. ດັ່ງນັ້ນ ຈຶ່ງໄດ້ກາຍເປັນສ່ວນປະກອບທີ່ສຳຄັນ ແລະເປັນສິ່ງທ້າທາຍຂອງລະບົບສາທາລະນະສຸກ.

ແຜນງານສາທາລະນະສຸກ ແລະ ໂພຊະນາການ (H&N) ແມ່ນເປັນການສືບເນື່ອງຈາກແນວຄິດລິເລີ່ມຂອງ 2 ແຜນງານຊຸກຍູ້ຂະແໜງການສາທາລະນະສຸກໃນເມື່ອກ່ອນ. ຈຸດປະສົງສະເພາະຂອງແຜນງານ (LAO/027) ໃນເມື່ອກ່ອນແມ່ນມີເປົ້າໝາຍໃນການຊຸກຍູ້ການຈັດຕັ້ງປະຕິບັດກອບການປະຕິຮູບຂະແໜງສາທາລະນະສຸກ ແຕ່ປີ 2013-2025 ເຊິ່ງມີຈຸດສຸມອັນສະເພາະທີ່ ແນໃສ່ສຸຂະພາບຂອງແມ່ແລະເດັກ ຜ່ານການສົ່ງເສີມ ແລະ ຊຸກຍູ້ລະບົບສາທາລະນະສຸກຂັ້ນເມືອງ ແລະ ຜູ້ທີ່ມີສ່ວນຮ່ວມ.

ແຜນງານສາທາລະນະສຸກ ແລະ ໂພຊະນາການ (H&N) ມີເປົ້າໝາຍແນໃສ່ການຜັນຂະຫຍາຍຈຸດດີຂອງແຜນງານທີ່ແລ້ວ ເພື່ອຈະເປັນການປະກອບສ່ວນທີ່ສຳຄັນເຂົ້າໃນຈຸດປະສົງຂອງການປ່ຽນແປງໄລຍະຍາວທີ່ປະຊາຊົນລາວຕ້ອງການ ແລະ ສາມາດເຂົ້າເຖິງຊຸດການບໍລິການດ້ານສຸຂະພາບທີ່ຈຳເປັນ ເຊິ່ງລວມມີ ການຮັກສາສຸຂະພາບຂອງຜູ້ຍິງໄວຈະເລີນພັນ, ແມ່ມານ, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ (RMNCAH) ແລະ ການບໍລິການດ້ານໂພຊະນາການ ທີ່ມີຄຸນະພາບພຽງພໍ ແລະ ທຸກຄົນສາມາດຈ່າຍໄດ້, ບໍ່ປ່ອຍປະໃຜໄວ້ຢູ່ເບື້ອງຫຼັງ.

ແຜນງານແມ່ນຈະສຸມໃສ່ 3 ແຂວງພາກກາງຄື: ແຂວງບໍລິຄຳໄຊ, ແຂວງຄຳມ່ວນ ແລະ ແຂວງວຽງຈັນ ໂດຍການດຳເນີນງານໃນການສ້າງຄວາມເຂັ້ມແຂງໃຫ້ແກ່ ລະບົບສາທາລະນະສຸກຄົບຊຸດ, ໃນຂະນະດຽວກັນ ກໍເປັນການເພີ່ມ ປະສິດທິພາບແລະປະສິດທິຜົນ ຜ່ານການເຂົ້າໄປຈັດຕັ້ງປະຕິບັດວຽກງານທີ່ຫນັກແຫນ້ນກວ່າເກົ່າ. ນອກນັ້ນ, ແຂວງບໍ່ແກ້ວ ກໍເປັນແຂວງເປົ້າຫມາຍບູລິມະສິດຂອງແຜນງານຮ່ວມມືລາວ-ລຸກຊຳບວກ, ທີ່ກຳລັງດຳເນີນງານ ວຽກງານພັດທະນາຊັບພະຍາກອນມະນຸດ, ວຽກງານຮັກສາສຸຂະພາບຂອງແມ່ແລະເດັກທີ່ມີການເຊື່ອມສານກັບ RMNCAH, ແລະ ບັນດາກິດຈະກຳທາງດ້ານໂພຊະນາການ ທີ່ຢູ່ພື້ນຖານອີກດ້ວຍ.

ບັນດາຜູ້ທີ່ໄດ້ຮັບຜົນປະໂຫຍດຫຼັກໃນເບື້ອງຕົ້ນ / ສຸດທ້າຍຂອງແຜນງານແມ່ນປະຊາຊົນທັງໝົດໃນ 4 ແຂວງທີ່ເປັນຄູ່ຮ່ວມ ເຊິ່ງຄາດວ່າມີປະມານ 1,400,000 ຄົນທີ່ກວມເອົາ ທຸກໆເມືອງໃນ 4 ແຂວງ. ແລະພິຈາລະນາເປັນພິເສດ ກໍຄື ກຸ່ມຄົນໃນໄວຈະເລີນພັນ, ແມ່ມານ, ເດັກເກີດໃຫມ່ ແລະ ເດັກນ້ອຍທີ່ມີອາຍຸຕ່ຳກ່ວາ 5 ປີ ເຊິ່ງຈະເປັນກຸ່ມທີ່ໄດ້ຮັບຜົນປະໂຫຍດຫຼັກ.

ນອກນັ້ນ, ແຜນງານ H&N ແມ່ນຍັງໄດ້ປະສານງານຮ່ວມມືກັບ ອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານ ADS ຫຼື Aide au Developpement de la Santé ໃນການສະຫນັບສະຫນູນ ສູນຫົວໃຈເສັ້ນເລືອດ ລາວ-ລຸກຊຳບວກທີ່ໂຮງໝໍມະໂຫສົດ, ນະຄອນຫຼວງວຽງຈັນ, ໃນການສະໜອງຄວາມຊ່ວຍເຫຼືອທາງດ້ານການແພດ ໂດຍການນຳໃຊ້ເຕັກນິກການແພດຂັ້ນສູງກ່ຽວກັບຫົວໃຈເສັ້ນເລືອດ ໂດຍຜ່ານການປິ່ນປົວຄົນເຈັບພາຍໃນປະເທດ ແລະ ຜ່ານການຝຶກອົບຮົມຍົກລະດັບຂອງພະນັກງານຜູ້ຊ່ຽວຊານຂອງລາວ.

**ປະຊາຊົນລາວ ສາມາດເຂົ້າເຖິງຮູບແບບການໃຫ້ບໍລິການດ້ານສຸຂະພາບທີ່ຈຳເປັນ (ລວມທັງ ການໃຫ້ບໍລິການ ດ້ານສຸຂະ ພາບ ຂອງແມ່ ແລະ ເດັກ ແລະ ໂພຊະນາການ) ທີ່ມີຄຸນະພາບສົມບູນ ແລະ ທຸກຄົນສາມາດຈ່າຍໄດ້, ບໍ່ປະຖິ້ມໃຜໄວ້ເບື້ອງຫຼັງ.**

↑ ປະຊາຊົນລາວ ສາມາດເຂົ້າເຖິງການບໍລິການ ດ້ານສຸຂະພາບທີ່ຈຳເປັນ.

↑ ການບໍລິການດ້ານສຸຂະພາບທີ່ຈຳເປັນທີ່ທຸກຄົນສາມາດຈ່າຍໄດ້.

↑ ປະຊາຊົນລາວໄດ້ຮັບບໍລິການດ້ານສຸຂະພາບທີ່ມີຄຸນະພາບ.

## ວິໄສທັດແຫ່ງການປ່ຽນແປງ

ເພື່ອທີ່ຈະສາມາດບັນລຸເປົ້າໝາຍຕັ້ງໄວ້, ແຜນງານ H&N ແມ່ນໄດ້ແຮງຈູງໃຈຈາກແນວທາງຂອງທິດສະດີດ້ານການປ່ຽນແປງເຊິ່ງສາມາດອະທິບາຍໄດ້ດັ່ງລຸ່ມນີ້:

### ປະຊາຊົນລາວ ສາມາດເຂົ້າເຖິງການບໍລິການດ້ານສຸຂະພາບທີ່ຈຳເປັນ

ແຜນງານ H&N ແມ່ນເປັນການຊຸກຍູ້ລະບົບນິເວດຂອງຂະແໜງສາທາລະນະສຸກສປປ ລາວໃຫ້ມີຄວາມຍືນຍົງ ແລະມີສຸຂະພາບທີ່ດີຂຶ້ນ, ໂດຍການຮັບປະກັນໃຫ້ ທຸກໆຄົນສາມາດເຂົ້າເຖິງການຮັກສາສຸຂະພາບທີ່ສຳຄັນໆ. ເຊິ່ງລະບົບນິເວດດັ່ງກ່າວ ແມ່ນຈະກວມລວມເອົາບັນດາພື້ນຖານສາທາລະນະສຸກທີ່ເໝາະສົມ (ລວມມີ ມີເຄື່ອງມືອຸປະກອນການແພດທີ່ພຽງພໍ, ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ລະບົບພື້ນຖານໂຄງລ່າງທີ່ເໝາະສົມ ທີ່ມີການເຄື່ອນໄຫວດີ ແລະ ມີການບຳລຸງຮັກສາທີ່ມີປະສິດທິພາບ), ລວມທັງ ການພັດທະນາດ້ານທັກສະໃຫ້ແກ່ກຳລັງພະນັກງານຂອງຂະແໜງສາທາລະນະສຸກ ໂດຍຜ່ານວຽກງານການຝຶກອົບຮົມຍົກລະດັບພະນັກງານຢ່າງຄົບຊຸດໃນ 4 ແຂວງເປົ້າໝາຍທີ່ໄດ້ຮັບຜົນປະໂຫຍດດັ່ງກ່າວ.

ນີ້ຈະເປັນການຮັບປະກັນວ່າ ທຸກຄົນສາມາດເຂົ້າເຖິງລະບົບຮັກສາສຸຂະພາບທີ່ເປັນຂັ້ນຕອນ, ເຊິ່ງລວມທັງ ວຽກງານຮັກສາສຸຂະພາບຂອງແມ່ ແລະເດັກ RMNCAH ແລະ ວຽກງານບໍລິການທາງດ້ານໂພຊະນາການ ແກ່ຄົນເຈັບນາກວດເຂດນອກ ແລະ ກິດຈະກຳຢູ່ພື້ນຖານ. ຈາກນັ້ນ, ຈຶ່ງກ້າວສູ່ການຮັກສາສຸຂະພາບດ້ວຍວິທີການທີ່ກ້າວໜ້າສູງຂຶ້ນ ແບບລົງເລິກຂະແໜງວິຊາສະເພາະ, ຢູ່ຂັ້ນໂຮງໝໍຂັ້ນແຂວງ ແລະຢູ່ສູນກາງ, ເຊັ່ນ ການເຂົ້າຮັບການປິ່ນປົວ ຫຼື ການຜ່າຕັດກ່ຽວກັບພະຍາດຫົວໃຈເສັ້ນເລືອດ ທີ່ສະໜັບສະໜູນໂດຍອົງການ ADS.

### ການບໍລິການດ້ານສຸຂະພາບທີ່ຈຳເປັນທີ່ທຸກຄົນສາມາດຈ່າຍໄດ້

ແຜນງານ ໄດ້ເຊື່ອມຈອດຊ່ອງຫວ່າງທາງດ້ານການເງິນສຳລັບປະຊາຊົນທຸກຄົນໃນການເຂົ້າເຖິງການໃຫ້ບໍລິການດ້ານສຸຂະພາບທີ່ຈຳເປັນ, ຍ້ອນມີການສະໜອງທຶນຢ່າງພຽງພໍ ໃຫ້ແກ່ບັນດາພື້ນຖານສາທາລະນະສຸກ ຜ່ານກົນໄກບໍລິຫານມີສ່ວນຮ່ວມ (ເຊິ່ງເປັນກົນໄກລິເລີ່ມໃນການສະໜອງທຶນ ທີ່ແຜນງານ H&N ໄດ້ຊຸກຍູ້ການເພີ່ມງົບປະມານປະກອບສ່ວນໃນບັນດາແຂວງໃນແຕ່ລະປີ, ເຂົ້າໃນວຽກງານຮັກສາສຸຂະພາບຂອງແມ່ແລະເດັກ ຢ່າງທັນການ ແລະ ການຄຸ້ມຄອງວຽກງານປະກັນສັງຄົມໃນຂັ້ນແຂວງ ຢ່າງມີປະສິດທິພາບ. ກົນໄກບໍລິຫານແບບມີສ່ວນຮ່ວມທີ່ມີການເຄື່ອນໄຫວດີ ຈະຊ່ວຍໃຫ້ບັນດາພື້ນຖານສາທາລະນະສຸກ ໄດ້ຮັບການສະໜອງງົບປະມານ ຢ່າງພຽງພໍແລະທັນກັບກຳນົດເວລາ. ການຄຸ້ມຄອງວຽກງານປະກັນສັງຄົມແຫ່ງຊາດທີ່ມີປະສິດທິພາບ ກໍຈະເປັນການປະກອບສ່ວນເຂົ້າ ໃນການຊ່ວຍເຫຼືອປະຊາຊົນລາວ ໃນການເຂົ້າເຖິງແລະຮ້ອງຂໍໃຫ້ຄ່າການບໍລິການດ້ານສຸຂະພາບ ມີລາຄາຫຼຸດໜ້ອຍລົງ ຫຼື ບໍ່ຕ້ອງເສຍຄ່າ ດ້ວຍເງິນຖົງຂອງຕົນເອງ.

### ປະຊາຊົນລາວໄດ້ຮັບການບໍລິການດ້ານສຸຂະພາບທີ່ມີຄຸນະພາບດີ

ແຜນງານຍັງໄດ້ສຸມໃສ່ການປັບປຸງຄຸນະພາບຂອງການຮັກສາສຸຂະພາບເປັນພິເສດ. ໂດຍໄດ້ຮັບຮູ້ວ່າ ຊ່ອງຫວ່າງທາງດ້ານຄວາມສາມາດຂອງພະນັກງານໃນທຸກໆລະດັບຂອງຂະແໜງສາທາລະນະສຸກ, ແຜນງານ ຈຶ່ງໄດ້ໃຊ້ວິທີການໃນການປັບປຸງຄຸນະພາບຂອງການຮັກສາສຸຂະພາບ ຢ່າງຮອບດ້ານ. ເຊິ່ງໄດ້ປະກອບມີ ການສ້າງ ວິທີການແບບຄົບຊຸດ ທີ່ເປັນຂົວເຊື່ອມຕໍ່ຊ່ອງຫວ່າງ ລະຫວ່າງ ຄວາມຮູ້ດ້ານທິດສະດີ ແລະ ພາກປະຕິບັດຕົວຈິງ. ໂດຍລວມເອົາການສາທິດໃນຮູບແບບສິດສອນໃນຫ້ອງຮຽນ ເຂົ້າກັບ ບັນດາປະສົບການໃນຕົວຈິງ, ລະບົບນິເວດດັ່ງກ່າວ ຈະຊ່ວຍເຮັດໃຫ້ພະນັກງານແພດໝໍ ມີທັກສະອັນຈຳເປັນ ແລະ ມີຄວາມໝັ້ນໃຈໃນການໃຫ້ບໍລິການດ້ານຮັກສາສຸຂະພາບໃຫ້ແກ່ປະຊາຊົນລາວ ຢ່າງມີຄຸນນະພາບ.

ນອກນັ້ນ, ແຜນງານ ຍັງສ້າງໃຫ້ພະນັກງານແພດໝໍມີຄວາມເຂັ້ມແຂງ ໂດຍສະໜອງໃຫ້ມີເຄື່ອງມືຮັບໃຊ້ ແລະ ຄວາມເຂົ້າໃຈຕໍ່ບັນຫາທີ່ພົບພໍ້ ໂດຍອີງຕາມປະກົດການຕົວຈິງ ເພື່ອການຕັດສິນໃຈໃນການປັບປຸງປັບປຸງ ຄຸນນະພາບຂອງການປິ່ນປົວ. ໃນນີ້ລວມມີ ການເລີ່ມນຳໃຊ້ ລະບົບຖານຂໍ້ມູນຄົນເຈັບແບບເອເລັກໂຕຣນິກ EMR ແລະ ການສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງ ລະຫວ່າງ ລະບົບຖານຂໍ້ມູນຂ່າວສານຂັ້ນເມືອງ DHIS2 ແລະ ວົງຈອນການວາງແຜນ, ເພື່ອຮັບປະກັນວ່າ ມີການຈັດສັນຂໍ້ມູນທີ່ດີ ລະຫວ່າງຊັບສິນທືນຮອນ ແລະ ການບໍລິການໃນທຸກລະດັບ ນັບແຕ່ຂັ້ນສູນກາງ ເຖິງ ຂັ້ນເມືອງ.

ໂດຍລວມແລ້ວ, ແຜນງານຮ່ວມມື ລາວ-ລູກຊຳບວກ ຄັ້ງທີ 5 ຫຼື ICPV ໃນຂະແໜງສາທາລະນະສຸກ ມີເປົ້າໝາຍແນໃສ່ການສ້າງເງື່ອນໄຂທີ່ເອື້ອອຳນວຍໃຫ້ແກ່ຄວາມຍືນຍົງຂອງສະຖາບັນ ແລະ ດ້ານເຕັກນິກວິຊາການ ໂດຍການເນັ້ນໃສ່ການປັບປຸງຄຸນນະພາບຂອງການປິ່ນປົວ, ການຝຶກອົບຍົກລະດັບພະນັກງານ ແລະ ການສ້າງບັນດາກິດຈະກຳໃນການພັດທະນາຄວາມສາມາດ, ແລະເນັ້ນໃສ່ບັນດາກິດຈະກຳທີ່ສະໜັບສະໜູນຕາມໂຄງຮ່າງການຈັດຕັ້ງຂອງລັດ, ການຫັນເປັນຂອງສະຖາບັນ ແລະ ການຜັນຂະຫຍາຍ ກົນໄກບໍລິຫານແບບມີສ່ວນຮ່ວມ.


ຕິດຕໍ່ LuxDev

ຫ້ອງການປະຈຳອາຊີ, ອົງການ LuxDev | ໂຄງການສາທາລະນະສຸກ ແລະ ໂພຊະນາການ
ຖະໜົນ ດົງໄປນາ, ບ້ານ ສະພານທອງເໜືອ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ

luxdev.lu


LUXEMBOURG AID & DEVELOPMENT

LUXDEV Luxembourg Development Agency